ຫ້ອງວ່າການລັດຖະບານ

ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ (ຄພທສ)

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

--------------------------------------------------------

# ບົດສະຫຼຸບປະຈຳເດືອນ

*ກ່ຽວກັບການຈັດຕັ້ງປະຕິບັດໂຄງການຍ່ອຍ ທລຍ*

*ສິງຫາ 2015*

**ຄະນະຮັບຜິດຊອບ ທລຍ ສູນກາງ**

*ກະກຽມໂດຍ:* ໜ່ວຍງານຕິດຕາມປະເມີນຜົນ

14 ກັນຍາ 2015

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການລັດຖະບານ
ຄະນະພັດທະນາຊົນນະບົດ ແລະ
ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ
**ກອງທຶນຫຼຸດຜ່ອນຄວາມທຸກຍາກ** ເລກທີ 0828 /ທລຍ

# ບົດສະຫຼຸບປະຈຳເດືອນ
# ສິງຫາ ແລະ ແຜນວຽກ ເດືອນ ກັນຍາ 2015

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ແມ່ນນຶ່ງໃນຄວາມພະຍາຍາມຂອງລັດຖະບານ ເພື່ອປະກອບສ່ວນເຂົ້າໃນວຽກງານ ພັດທະນາເສດຖະກິດສັງຄົມ ໂດຍສະເພາະການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງ ສປປ ລາວ. ການຈັດຕັ້ງປະຕິບັດວຽກງານຂອງ ທລຍ 2 ແມ່ນໄດ້ກວມເອົາທັງໝົດ 10 ແຂວງ 42 ເມືອງ 278 ກຸ່ມບ້ານ ເຊິ່ງປະກອບມີ 1951 ບ້ານ ແລະ ມີຫລາຍກວ່າ 1400 ໂຄງການຍ່ອຍດ້ານພື້ນຖານໂຄງລ່າງ ນຳໃຊ້ງົບປະມານຫລາຍກວ່າ 300.68 ຕື້ກີບ (ແຕ່ປີ 2012-2015) ທີ່ກ່ຽວຂ້ອງກັບວຽກງານການສຶກສາ, ສາທາລະນະສຸກ, ນໍ້າສະອາດ, ຄົມມະນາຄົມ, ໄຟຟ້າຂະໜາດນ້ອຍ ແລະ ໂຄງລ່າງດ້ານກະສິກຳ ເຊິ່ງມີຜູ້ຮັບຜົນປະໂຫຍດໂດຍກົງຫລາຍ 600,000 ຄົນ.

ເພື່ອການກະກຽມສຳລັບການສືບຕໍ່ວຽກງານ ທລຍ ໄລຍະ 3 ທາງຜູ້ໃຫ້ທຶນໄດ້ມີການເຮັດປະເມີນໄລຍະທ້າຍ ຂອງໂຄງການ (Endline Survey). ທັງນີ້ກໍເພື່ອປຽບທຽບຜົນໄດ້ຮັບກ່ອນ ແລະຫລັງໂຄງການ ເພື່ອປຽບທຽບກຸ່ມບ້ານທີ່ ທລຍ ໃຫ້ການຊ່ວຍເຫລືອ ແລະ ກຸ່ມບ້ານທີ່ ທລຍ ບໍ່ໃຫ້ການຊ່ວຍເຫລືອ, ພ້ອມທັງມີການກະກຽມກ່ຽວກັບວຽກງານຂອງ ທລຍ 3 ໂດຍອີງໃສ່ປະສົບການ ແລະ ຜົນສຳເລັດຂອງ ທລຍ 2.

## 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ

### 1.1 *ຮອບວຽນ 12 (ສົກປີ 2014-2015)*

ສຳລັບຮອບວຽນ 12 (ສົກປີ 2014-2015) ມີຈຳນວນທັງໝົດ 438 ໂຄງການຍ່ອຍ ໃນນັ້ນຈຳນວນໂຄງການຍ່ອຍພາຍໃຕ້ທຶນພາຍໃນ ມີ 74 ໂຄງການ ເປັນມູນຄ່າປະມານ 16 ຕື້ກີບ ທີ່ໄດ້ຜ່ານການປະມູນແລ້ວ. ໃນນັ້ນຈັດຕັ້ງປະຕິບັດສຳເລັດແລ້ວ 100% ມີ 300 ໂຄງການເທົ່າກັບ 68.49%, ຄວາມຄືບໜ້າຫລາຍກວ່າ 50% ມີ 74 ໂຄງການ, ໜ້ອຍກວ່າ 50% ມີ 31 ໂຄງການ ສ່ວນທີ່ເຫລືອ 33 ໂຄງການແມ່ນກຳລັງກະກຽມເພື່ອຈັດຕັ້ງປະຕິບັດ ດັ່ງລາຍລະອຽດຕາມຕາຕະລາງລຸ່ມນີ້:

ຕາຕະລາງ 1. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 12

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 59 | 48 | 2 | 4 | 5 |
| ສາລະວັນ | 31 | 8 | 17 | 5 | 1 |
| ຊຽງຂວາງ | 42 | 41 | 1 | 0 | 0 |
| ຜົ້ງສາລີ | 25 | 4 | 13 | 5 | 3 |
| ຫລວງນ້ຳທາ | 21 | 10 | 8 | 1 | 2 |
| ຫົວພັນ | 124 | 116 | 8 | 0 | 0 |
| ຫຼວງພະບາງ | 48 | 22 | 13 | 0 | 13 |
| ອຸດົມໄຊ | 50 | 36 | 6 | 5 | 3 |
| ອັດຕະປື | 18 | 14 | 2 | 2 | 0 |
| ເຊກອງ | 20 | 1 | 4 | 9 | 6 |
| **ລວມ** | **438** | **300** | **74** | **31** | **33** |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ສິງຫາ 2015*

## 1.2. ຮອບວຽນ 11 (ສົກປີ 2013-2014)

ໃນສົກປີ 2013 - 2014 (ຮອບວຽນ 11) ທລຍ ໄດ້ຈັດຕັ້ງປະຕິບັດວຽກງານຢູ່ 10 ແຂວງ, 42 ເມືອງ, 278 ກຸ່ມບ້ານ ແລະ ກວມເອົາ 1,951 ບ້ານ, ໃນຮອບວຽນດັ່ງກ່າວ ທລຍ ໄດ້ໃຫ້ການສະໜັບສະໜູນຈຳນວນ 333 ໂຄງການ ແລະ ໃຊ້ງົບປະມານທັງໝົດປະມານ 77,447,719,567 ກີບ, ການຈັດຕັ້ງປະຕິບັດມາຮອດທ້າຍເດືອນ ສິງຫາ 2015 ມີຄວາມຄືບໜ້າດັ່ງນີ້: ຈາກທັງໝົດ 333 ໂຄງການ, 326 ໂຄງການ (97.89%) ແມ່ນໄດ້ຈັດຕັ້ງປະຕິບັດສຳເລັດ 100%, ສຳລັບໂຄງການທີ່ມີຄວາມຄືບໜ້າຫລາຍກວ່າ 50% ແມ່ນມີຈຳນວນ 7 ໂຄງການ ແລະ ຄາດວ່າຈະສຳເລັດໃນມໍ່ໆ ນີ້. ອີງຕາມຕາຕະລາງຂ້າງລຸ່ມນີ້ ເຫັນວ່າທຸກໂຄງການ ໃນຮອບວຽນດັ່ງກ່າວ ແມ່ນໄດ້ເລີ່ມຈັດຕັ້ງປະຕິບັດທັງໝົດດັ່ງລາຍລະອຽດຕາມຕາຕະລາງ 2 ແລະ 3.

**ຕາຕະລາງ 2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 11**

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ສະຫວັນນະເຂດ | 45 | 45 | 0 | 0 | 0 |
| ສາລະວັນ | 16 | 16 | 0 | 0 | 0 |
| ຊຽງຂວາງ | 29 | 29 | 0 | 0 | 0 |
| ຜົ້ງສາລີ | 23 | 23 | 0 | 0 | 0 |
| ຫຼວງນ້ຳທາ | 16 | 14 | 2 | 0 | 0 |
| ຫົວພັນ | 69 | 69 | 0 | 0 | 0 |
| ຫຼວງພະບາງ | 43 | 42 | 1 | 0 | 0 |
| ອຸດົມໄຊ | 54 | 54 | 0 | 0 | 0 |
| ອັດຕະປື | 18 | 15 | 3 | 0 | 0 |
| ເຊກອງ | 20 | 19 | 1 | 0 | 0 |
| **ລວມ** | **333** | **326** | **7** | **0** | **0** |

*<u>ແຫຼ່ງຂໍ້ມູນ</u>: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ສິງຫາ 2015*

ຈາກຕາຕະລາງຂ້າງເທິງນີ້ 7 ໂຄງການທີ່ບໍ່ທັນສາເລັດ ແລະ ກາລັງຈັດຕັ້ງປະຕິບັດຢູ່ ເຊິ່ງມີລາຍລະອຽດ ແລະ ຄວາມຄືບໜ້າດັ່ງຕາຕະລາງລຸ່ມນີ້:

**ຕາຕະລາງ 3 ໂຄງການທີ່ຫລ້າຊ້າໃນຮອບວຽນ 11**

| ຮອບວຽນ | ຊື່ໂຄງການ | ແຂວງ | ເມືອງ | ກຸ່ມບ້ານ | ບ້ານ | ຄວາມຄືບໜ້າ% |
|---|---|---|---|---|---|---|
| 11 | ກໍ່ສ້າງຕະຫລາດຊຸມຊົນ | ແຂວງ ອັດຕະປື | ພູວົງ | ວົງສຳພັນ | ຄຳວົງສາ | 77 |
| 11 | ກໍ່ສ້າງລະບົບນ້ຳລິນ | ແຂວງ ເຊກອງ | ລະມາມ | ປາກປຸນ | ປາກກະຢອງ | 95 |
| 11 | ສ້ອມແປງລະບົບນ້ຳລິນ | ແຂວງ ຫຼວງພະບາງ | ໂພນໄຊ | ກຸ່ມ ບ້ານນ້ຳບໍ່ | ຫ້ວຍມັນ | 70 |
| 11 | ກໍ່ສ້າງສຸກສາລາ | ແຂວງ ອັດຕະປື | ພູວົງ | ສົມບູນ | ພູຍາງ | 90 |
| 11 | ກໍ່ສ້າງໃໝ່ ໂຮງຮຽນປະຖົມ | ແຂວງ ອັດຕະປື | ສະໜາມໄຊ | ໜອງຫີນ | ມັດກາ | 80 |
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນ້ຳທາ | ນາແລ | ພູຫຼວງ | ພູຫຼວງມົກຈົງ | 58 |
| 11 | ກໍ່ສ້າງຂົວອູ່ | ແຂວງ ຫລວງນ້ຳທາ | ລອງ | ບອກບໍ່ (ຈ່າໃໝ່ ) | ແສນຈູມປ(ຈ່າປີ) | 65 |

*<u>ແຫຼ່ງຂໍ້ມູນ</u>: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ສິງຫາ 2015*

ຕາຕະລາງ 4. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 11 (ແຍກຕາມຂະແໜງການ)

| ແຂວງ | ຈຳນວນໂຄງການ | ສຳເລັດ 100% | ສຳເລັດກວ່າ 50% | ສຳເລັດບໍ່ຮອດ 50% | ສຳເລັດ 0% |
|---|---|---|---|---|---|
| ກະສິກຳ ແລະ ປ່າໄມ້ | 38 | 37 | 1 | 0 | 0 |
| ຄົມມະນາຄົມ | 57 | 55 | 2 | 0 | 0 |
| ສາທາລະນະສຸກ | 23 | 22 | 1 | 0 | 0 |
| ສຶກສາ | 119 | 118 | 1 | 0 | 0 |
| ນ້ຳສະອາດແລະສຸຂະອະນາໄມ | 90 | 88 | 2 | 0 | 0 |
| ພະລັງງານ ແລະ ບໍ່ແຮ່ | 6 | 6 | 0 | 0 | 0 |
| ລວມ | **333** | 326 | 7 | 0 | 0 |

*ແຫຼ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ, ທລຍ, 31 ສິງຫາ 2015*

### 1.3. ຮອບວຽນ 9 ແລະ ຮອບວຽນ 10 (ສົກປີ 2012-2013 ແລະ ສົກປີ 2013-2014)

ໃນຮອບວຽນທີ 9 ທລຍ ໄດ້ໃຫ້ການສະໜັບສະໜູນຈຳນວນທັງໝົດ 262 ໂຄງການ ຢູ່ 7 ແຂວງເປົ້າໝາຍ (ອັດຕະປື, ເຊກອງ, ສາລະວັນ, ສະຫວັນນະເຂດ, ຫົວພັນ, ຊຽງຂວາງ ແລະ ຫລວງນ້ຳທາ) ແລະ ນຳໃຊ້ງົບປະມານທັງໝົດ 61,114,300,917 ກີບ ມີຈຳນວນ 261 ໂຄງການເທົ່ານັ້ນທີ່ໄດ້ຈັດຕັ້ງປະຕິບັດສຳເລັດ 100 % ແລະ ງົບປະມານທີ່ໄດ້ນຳໃຊ້ 60,963,457,903 ກີບ ຫລື 99.75 % ຂອງງົບປະມານທັງໝົດ. ເຊິ່ງການຈັດຕັ້ງປະຕິບັດບາງໂຄງການໃນຮອບວຽນດັ່ງກ່າວແມ່ນມີ 1 ໂຄງການຄື ໂຄງການກໍ່ສ້າງຫໍພັກນັກສຶກສາ ຢູ່ແຂວງຫລວງນ້ຳທາ ເມືອງນາເລ ກຸ່ມສະເລື່ອງ ບ້ານດອນທິບ ນັ້ນແມ່ນຖືກຍົກເລີກເນື່ອງຈາກຖືກໂຄງການສ້າງເຖື່ອນໄຟຟ້າດັ່ງນັ້ນ ພວກເຮົາສາມາດສະຫລຸບໄດ້ວ່າ ສຳຫລັບຮອບວຽນ 9 ແມ່ນຈັດຕັ້ງປະຕິບັດສຳເລັດແລ້ວ 100%.

ໃນຮອບວຽນທີ 10 ທລຍ ໄດ້ໃຫ້ການສະໜັບສະໜູນທັງໝົດ 393 ໂຄງການ ແລະ ງົບປະມານທັງໝົດຈຳນວນ 79,119,001,522 ກີບ. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແມ່ນຄືກັບທີ່ໄດ້ລາຍງານໃນເດືອນຜ່ານມາ, ມີຈຳນວນ 392 ໂຄງການທີ່ໄດ້ສຳເລັດການກໍ່ສ້າງ ແລະ ງົບປະມານຈຳນວນ 78,057,591,242 ກີບ (99%) ແມ່ນໄດ້ຖືກໂອນສາລັບການຈັດຕັ້ງປະຕິບັດໂຄງການຍ່ອຍເຫລົ່ານັ້ນ. ສາລັບ 1 ໂຄງການທີ່ຍັງບໍ່ສຳເລັດນັ້ນມີຄວາມຄືບໜ້າໜ້ອຍກວ່າ 50% ຢູ່ແຂວງ ຫຼວງນ້ຳທາ ເມືອງນາແລ ກຸ່ມສະແກນ (ບ້ານສະແກນ) ເປັນໂຄງການກໍ່ສ້າງຂົວອູ່ ມີຄວາມລ້າຊ້າເນື່ອງຈາກວ່າໂຄງການດັ່ງກ່າວເປັນໂຄງການທົດລອງ ແລະ ເປັນໂຄງການຂະໜາດໃຫຍ່ອຸປະກອນສ່ວນໃຫຍ່ແມ່ນນຳມາຈາກຕ່າງປະເທດ ແລະ ກຳລັງຢູ່ໃນຂັ້ນຕອນເພື່ອກຳນົດມາດຕະຖານເຫລັກຄືນໃໝ່ (ປະເທດຫວຽດນາມ), ເປັນທຶນສົມທົບລະຫວ່າງ ທລຍ ແລະ ພາກສ່ວນອື່ນ.

## 2. ງົບປະມານ ແລະ ການເບີກຈ່າຍສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍ ທລຍ 2

ສຳລັບການເບີກຈ່າຍງົບປະມານ ຮອດທ້າຍເດືອນ ສິງຫາ 2015 ໃນແຕ່ລະຮອບວຽນ ຄື: ຮອບວຽນ 9, ເບີກຈ່າຍໄປແລ້ວ 60,963,457,903 ກີບ ເທົ່າກັບ 99.75 %, ຮອບວຽນ 10 ເບີກຈ່າຍໄປແລ້ວ 78,876,779,826 ກີບ ເທົ່າກັບ 99.70 % ແລະ ຮອບວຽນ 11 ແມ່ນໄດ້ເບີກຈ່າຍແລ້ວ ຈຳນວນ

75,244,282,663 ກີບ ຫລື ເທົ່າກັບ 97 % ຂອງງົບປະມານທັງໝົດ (77,447,719,567 ກີບ) ແລະ ສໍາລັບຮອບວຽນ 12 ງົບປະມານທັງໝົດ 82,889,353,065 ກີບ ເບີກຈ່າຍໄປແລ້ວ 38,371,278,203 ກີບ ລາຍລະອຽດດັ່ງຕາຕະລາງ 4 ລຸ່ມນີ້.

**ຕາຕະລາງ 5. ຄວາມຄືບໜ້າໃນການເບີກຈ່າຍງົບປະມານໂຄງການຍ່ອຍ ແຕ່ລະຮອບວຽນ (2011-2015)**

| ຮອບວຽນ (ສົກປີ) | ຈ/ນ ໂຄງການ ທັງໝົດ | ງົບປະມານ (ກີບ) | ຈ/ນ ກໍ່ສ້າງ ສໍາເລັດ 100% | ການເບີກຈ່າຍ ງົບປະມານ (ກີບ) | ຍອດເຫຼືອ |
|---|---|---|---|---|---|
| ຮອບວຽນ 9 (2011-2012) | 262 | 61,114,300,917 | 261 | 60,963,457,903 | 150,843,014 |
| ຮອບວຽນ 10 (2012-2013) | 393 | 79,119,001,522 | 392 | 78,876,779,826 | 242,221,696 |
| ຮອບວຽນ 11 (2013-2014) | 333 | 77,447,719,567 | 326 | 75,244,282,663 | 2,203,541,904 |
| ຮອບວຽນ 12 (2014-2015) | 438 | 82,889,353,065[1] | 300 | 38,371,278,203 | 44,518,074,862 |
| ຮອບວຽນ 13 (ສົກປີ2015-2016) | 110 | ບ້ວງທຶນສົມທົບລັດຖະບານແມ່ນສໍາເລັດການສໍາຫຼວດ-ອອກແບບແລ້ວ | 0 | - | ໄດ້ແບ່ງເປັນ 2 ງວດຄື: ງວດທີ່ 1 ແຕ່ເດືອນ ມັງກອນ-ກັນຍາ, ງວດທີ່ 2 ແຕ່ເດືອນ ຕຸລາ-ທັນວາ 2016 ງວດລະ 16 ຕື້. |
| ລວມ | 1,536 | 304,641,024,006 | 1,279 | 253,455,798,595 | 47,114,681,476 |

*ແຫຼ່ງຂໍ້ມູນ: ພະແນກບໍລິຫານ - ການເງິນ, ທລຍ, 31 ສິງຫາ 2015*

## 3. ວຽກງານວິຊາສະເພາະ ແລະ ຕິດຕາມໂຄງການ

- ວຽກງານພັດທະນາຊຸມຊົນ

- ຕິດຕາມ ແລະ ກວດກາການດໍາເນີນກອງປະຊຸມປະຈໍາເດືອນຜູ້ປະສານງານກຸ່ມບ້ານ ຂອງແຂວງ ອຸດົມໄຊ, ຫລວງພະບາງ, ຜົ້ງສາລີ ແລະ ແຂວງ ສາລະວັນ.
- ປັບປຸງເນື້ອໃນການຈັດກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດວຽກງານ ທລຍ ປະຈໍາປີຂັ້ນເມືອງ ແລະ ຂັ້ນແຂວງ.
- ປັບປຸງຂໍ້ມູນຂັ້ນບ້ານ (ຂຽນໃສ່ເຈັ້ຽແຜ່ນໃຫ່ຍເພື່ອຕິດໄວ້ຢູ່ບ່ອນປະຊຸມຂອງບ້ານ) ສໍາເລັດແລ້ວ 38 ບ້ານ ນອນໃນ 5 ເມືອງທີ່ກໍາລັງທົດລອງເຮັດ CDD, ປະຈຸບັນຍັງ 8 ບ້ານທີ່ກໍາ ລັງດໍາເນີນການຢູ່.
- ຮ່ວມກັບທະນາຄານໂລກ ແລະ ຊ່ຽວຊານທີ່ປຶກສາ ປັບປຸງຂັ້ນຕອນການຈັດຕັ້ງປະຕິບັດວຽກງານ ທລຍ ໃຫ້ເຂົ້າເປັນອັນໜຶ່ງອັນດຽວກັນ ລະຫວ່າງວຽກໂຄງລ່າງພື້ນຖານ, ວຽກປັບປຸງຊີວິດການເປັນຢູ່ ແລະ ວຽກໂພຊະນາການ.

---

[1] ງົບປະມານອາດມີການປ່ຽນແປງເນື່ອງຈາກສັນຍາກັບຜູ້ຮັບເຫມົາບາງໂຄງການກໍາລັງດໍາເນີນການຢູ່

- ເຜີຍແຜ່ຂໍ້ມູນຂ່າວສານຜ່ານກະດານຂ່າວກຸ່ມບ້ານເຊິ່ງມີ 19 ຫົວຂໍ້ຂ່າວ ແລະ ໄດ້ມີການເຜີຍແຜ່ຂໍ້ມູນຂ່າວສານຜ່ານວິທະຍຸແຫ່ງຊາດ, ລາຍການລຸງສ້າງ-ລຸງສາ, ກົມຂ່າວສານແມ່ຍິງລາວ, ໜັງສືພິມຕ່າງໆ ແລະ ເວບໄຊ ທລຍ ລວມມີ 2 ຫົວຂໍ້ຂ່າວ.
- ບ້ານ ຜາແຕ ກຸ່ມຈ່າໃໝ່ ມີໂຮງຮຽນປະຖົມຖາວອນຫຼັງໃໝ່ສໍາເລັດແລ້ວ ແລະ ທລຍ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານວຽກປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ ແລະ ສໍາເລັດການສໍາພາດລາຍການຮອບບ້ານຜ່ານເມືອງ ກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ແຜນການໃນຕໍ່ໜ້າ ໂດຍສະເພາະແມ່ນການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງຢູ່ 3 ແຂວງທີ່ກໍາລັງດໍາເນີນການທົດລອງຢູ່ພ້ອມທັງກະກຽມເຄື່ອງມື ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ ສໍາເລັດ 90%
- ກະກຽມແປສາລະຄະດີ 4 ເລື່ອງ ສໍາເລັດ 30% ຄື:
    - DVD ແນະນໍາໂຄງການ ທລຍ
    - DVD ແນະນໍາວຽກງານ ປັບປຸງຊີວິດການເປັນຢູ່ ແລະໂພຊະນາການ
    - DVD ຮູບແບບ ແລະ ຂັ້ນຕອນໃນການຈັດຕັ້ງປະຕິບັດວຽກງານປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ
    - ຊຸມຊົນເຂັ້ມແຂງ ແລະ ບົດຮຽນພົ້ນເດັ່ນ ກ່ຽວກັບວຽກງານປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການບ້ານສາກົກ
- ກະກຽມ ການວາງສະແດງໃນກອງປະຊຸມຂອງອົງຄະນະພັກ ທລຍ ຄັ້ງທີ 4 ໃນຕົ້ນເດືອນ ກັນຍາ 2015 ທີ່ຫໍປະຊຸມແຫ່ງຊາດ ແລະ ກອງປະຊຸມລັດຖະມົນຕີພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກອາຊຽນ ຄັ້ງທີ 9 ໃນລະຫວ່າງວັນທີ 13-17 ຕຸລາ 2015 ທີ່ຫໍວັດທະນະທໍາແຫ່ງຊາດ.
- ສໍາເລັດການສ້າງ DVD ຮູບແບບ ແລະ ຂັ້ນຕອນໃນການຈັດຕັ້ງປະຕິບັດວຽກງານປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ.
- ສໍາເລັດອອກແບບເສື້ອ ແລະ ຖົງພາຍ ທີ່ຈະຮັບໃຊ້ ກອງປະຊຸມລັດຖະມົນຕີພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ອາຊຽນ ຄັ້ງທີ 9 ແລະ ປະສານງານກັບຊ່ຽວຊານແຕ້ມຮູບ ເພື່ອແຕ້ມຮູບ CDD ໃຫ້ສໍາເລັດ ແລະ ລົງສີສໍາເລັດແລ້ວ 90%.

- <u>ວຽກງານວິສະວະກໍາ ແລະ ວິຊາການ</u>

- ອອກແບບການປະດັບປະດາລົດແຫ່ຂະບວນສະເຫລີມສະຫລອງວັນຊາດທີ 2 ແລະ ສືບຕໍ່ລົງຕິດຕາມໂຄງການຍ່ອຍ ຮອບວຽນທີ 11, 12
- ສືບຕໍ່ເຮັດວຽກຮ່ວມກັບ ILO ແລະ ກະກຽມຫລັກສູດຝຶກການຝຶກອົບຮົມ Water CAD ໃຫ້ວິຊາການຂັ້ນເມືອງ ພ້ອມທັງສໍາເລັດການເກັບກໍາຈໍານວນບ້ານ ເພື່ອກະກຽມຈັດຕັ້ງປະຕິບັດໂຄງການຮ່ວມມືກັບອົງການນໍ້າ ແລະ ສຸກຂະອະນາໄມ ແລະ ນໍ້າສະອາດ.

- ກະກຽມຫລັກສູດຝຶກອົບຮົມ Grasp & Gear ໃຫ້ວິຊາການຂັ້ນເມືອງ ພ້ອມທັງກວດຄືນ ແລະ ປັບປຸງແບບແຕ້ມກໍ່ສ້າງປະເພດອາຄານ ສໍາລັບນໍາໃຊ້ຮອບວຽນທີ 13.
- ຝຶກອົບຮົມປະຈໍາປີ ສູນກາງ + 6 ແຂວງ ພາກເໜືອ (ແຂວງ ຫົວພັນ, ຊຽງຂວາງ, ຜົ້ງສາລີ, ຫລວງນໍ້າທາ, ອຸດົມໄຊ ແລະ ແຂວງ ຫລວງພະບາງ) ວັນທີ 17 - 21 ສິງຫາ 2015, ຜູ້ເຂົ້າຮ່ວມທັງໝົດ 125 ທ່ານ, ຍິງ 40 ທ່ານ ແລະ ຝຶກອົບຮົມປະຈໍາປີ ສູນກາງ + 4 ແຂວງ ພາກໃຕ້ (ແຂວງ ສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ແຂວງ ອັດຕະປື) ວັນທີ 31 ສິງຫາ - 4 ກັນຍາ 2015, ຜູ້ເຂົ້າຮ່ວມທັງໝົດ 79 ທ່ານ, ຍິງ 17 ທ່ານ ແລະ ຫົວຂໍ້ຝຶກອົບຮົມແມ່ນ

  1). ພື້ນຖານການຄິດໄລ່-ອອກແບບທາງຊົນນະບົດ.
  2). ການນໍາໃຊ້ GPS.
  3). ແບບໂຮງຮຽນ ສະບັບປັບປຸງໃໝ່ ທີ່ອະນຸມັດຈາກ ກະວງສຶກສາ ແລະ ກິລາ.
  4). ໃບຄິດໄລ່ບໍລິມາດວຽກ ເພື່ອກະກຽມໃສ່ CDD.
  5). ພື້ນຖານການຄິດໄລ່-ອອກແບບ ຝາຍຂະໜາດນ້ອຍ.
  6). ວຽກງານກວດກາຄຸນນະພາບຂອງໂຄງການຍ່ອຍ.
  7). ການຂື້ນແຜນງົບປະມານຈັດກອງປະຊຸມ ແລະ ຝຶກອົບຮົມ ປະຈໍາປີ.
  8). ຫົວຂໍ້ຝຶກອົບຮົມທີ່ຈໍາເປັນສໍາລັບວິຊາການຂັ້ນສູນກາງ, ແຂວງ ແລະ ເມືອງ.

▪ <u>ວຽກງານຕິດຕາມ-ປະເມີນຜົນ</u>

- ຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຍ່ອຍໃນແຕ່ລະແຂວງ ໂດຍສະເພາະບັນດາໂຄງການທີ່ມີຄວາມລ້າຊ້າໃນຮອບວຽນຜ່ານມາ (ຮອບວຽນ 9, 10, 11 ແລະ 12) ລວມທັງການເບີກຈ່າຍງົບປະມານທັງໝົດ ທັງນີ້ກໍເພື່ອຫາທາງແກ້ໄຂ ເພື່ອໃຫ້ໂຄງການເຫລົ່ານັ້ນ ສໍາເລັດ ແລະ ອໍານວຍຄວາມສະດວກໃຫ້ແກ່ຊຸມຊົນ.
- ເພື່ອສະແດງຜົນສໍາເລັດຂອງໂຄງການ ມັນຈໍາເປັນຕ້ອງມີລະບົບຕິດຕາມ-ປະເມີນຜົນທີ່ສົມບູນ ແລະ ສາມາດຕອບສະໜອງຂໍ້ມູນສໍາຄັນຕາມຕົວຊີ້ວັດຜົນໄດ້ຮັບຂອງໂຄງການ ເປັນຕົ້ນແມ່ນມີລະບົບຖານຂໍ້ມູນ ທີ່ເກັບກໍາທຸກການ ເຄື່ອນໄຫວຂອງໂຄງການແຕ່ເລີ່ມຕົ້ນຈົນເຖິງທ້າຍໂຄງການ ພ້ອມດຽວກັນນັ້ນແນກຕົນນັ້ນກໍຕ້ອງມີການລາຍງານຕໍ່ລັດຖະບານ ແລະ ຜູ້ໃຫ້ທຶນເປັນແຕ່ລະໄລຍະ ພະແນກຕິດຕາມ-ປະເມີນຜົນມີແຜນເພື່ອຈັດກອງປະຊຸມແລກປ່ຽນບົດຮຽນດັ່ງກ່າວ ກັບຂະແໜງການທີ່ກ່ຽວຂ້ອງ ແລະ ບັນດາຜູ້ໃຫ້ທຶນຢູ່ ສປປ ລາວ.
- ສັງລວມ ແລະ ເຮັດບົດປະເມີນ ຄວາມຍືນຍົງຂອງໂຄງການ ໄປຄຽງຄູ່ກັບການປະເມີນຄວາມເຂົ້າໃຈກ່ຽວກັບການນໍາໃຊ້ວຽກງານກົນໄກປະກອບຄໍາຄິດເຫັນ ແລະ ແກ້ໄຂບັນຫາ ເພື່ອເປັນການຍົກສູງຄວາມເຂົ້າໃຈຂອງຊຸມຊົນຕໍ່ກັບວຽກງານດັ່ງກ່າວ.

- <u>ວຽກງານບໍລິຫານ - ການເງິນ</u>

- ສໍາເລັດການປັບປຸງພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງພະນັກງານ ທີ່ຮັບຜິດຊອບກິດຈະກໍາປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ ຕໍາແໜ່ງດັ່ງຕໍ່ໄປນີ້:
  1) ຫົວໜ້າຮັບຜິດຊອບວຽກປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ ຂັ້ນສູນກາງ
  2) ປະສານງານດ້ານກິດຈະກໍາປັບປຸງຊີວິດການເປັນຢູ່ ຂັ້ນສູນກາງ
  3) ຜູ້ຊ່ວຍກິດຈະກໍາປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ ຂັ້ນສູນກາງ
  4) ວິຊາການຂັ້ນເມືອງດ້ານປັບປຸງຊີວິດການເປັນຢູ່
  5) ວິຊາການຂັ້ນເມືອງດ້ານໂພຊະນາການ
  6) ປະສານງານຂັ້ນບ້ານດ້ານປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ
  7) ອາສາສະໝັກຂັ້ນເມືອງດ້ານວຽກງານຕິດຕາມ ແລະ ກວດກາ
- ດໍາເນີນຂະບວນການຄັດເລືອກພະນັກງານສໍາລັບຕໍາແໜ່ງຂ້າງເທິງ: ໄດ້ປະກາດຮັບສະໝັກບັນດາຕໍາແໜ່ງຂ້າງເທິງໃນໄລຍະວັນທີ 25 ສິງຫາ 2015-08 ກັນຍາ 2015. ຂັ້ນຕອນຕໍ່ໄປແມ່ນຄັດຈ້ອນບັນຊີສັ້ນຂອງຜູ້ສະໝັກ ແລະ ປະເມີນຄວາມສາມາດ.
- ສໍາເລັດການປັບປຸງພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ຕໍາແໜ່ງຜູ້ຊ່ວຍບັນຊີ ແລະ ກວດສອບພາຍໃນດ້ານວຽກງານວິສະວະກໍາ ຂັ້ນສູນກາງ, ປະຈຸບັນກໍາລັງປະກາດຮັບສະໝັກ

- <u>ວຽກປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ (LN)</u>

- ໄດ້ເຂົ້າຮ່ວມກອງປະຊຸມສໍາມະນາ ແລກປ່ຽນບົດຮຽນ ແລະ ແຜນການຈັດຕັ້ງປະຕິບັດວຽກງານ LN ໃນຄັ້ງວັນທີ 12-14 ສິງຫາ 2015 ທີ່ຫ້ອງປະຊຸມ ສູນວິໄຈພະຍາດຊຶມເຊື້ອຄຣິສຕົບ ກອງປະຊຸມໄດ້ຄົ້ນຄວ້າປຶກສາຫາລື ແລະ ວາງແຜນໃນຕໍ່ໜ້າ ວຽກງານໂພສະນາການດັ່ງນີ້:
  1. ຂັ້ນຕອນຈັດຕັ້ງປະຕິບັດກິດຈະກໍາໂຄງການ ແຕ່ກ່ອນ 23 ຂັ້ນຕອນ ປັບປຸງໃໝ່ ເປັນ 18 ຂັ້ນຕອນ ສໍາລັບວຽກປັບປຸງຊີວິດການເປັນຢູ ແລະ 17 ຂັ້ນຕອນ ສໍາລັບວຽກສຸຂະພາບ ແລະ ໂພຊະນາການ ແລະ ສໍາລັບຂັ້ນຕອນທີ 17 ຂອງວຽກໂພຊະນາການ ຊຶ່ງລະບຸວ່າ ໃຫ້ຊຸມຊົນມີການປະກອບສ່ວນໃນການປຸງແຕ່ງອາຫານເສີມ ໃຫ້ໄດ້ 80% ທາງແຕ່ລະເມືອງ ໃຫ້ຄໍາເຫັນວ່າເປັນໄປໄດ້ຍາກ ແລະ ໄດ້ລໍຖ້າຮັບຟັງຄໍາຄິດເຫັນຈາກ ທາງສູນໂພຊະນາການແຫ່ງຊາດ ຊຶ່ງໄດ້ໃຫ້ຄວາມແນະນໍາຢ່າງກະຈ່າງແຈ້ງວ່າ ຄວນໃຫ້ຊຸມຊົນປະກອບສ່ວນຫຼາຍທີ່ສຸດ ໂຄງການພະຍາຍາມສະໜັບສະໜູນທຶນເລັກນ້ອຍເທົ່ານັ້ນ ທັງນີ້ເພື່ອໃຫ້ກິດຈະກໍາເປັນຂອງຊຸມຊົນ ແລະມີຄວາມຍືນຍົງຕະຫຼອດໄປ
  2. ການສື່ສານໃຫ້ຄວາມຮູ້ສຸຂະສຶກສາ: ດ້ານວຽກໂພສະນາການ, ສາມາດເອົາວຽກໂພສະນາເຂົ້າໃນວາລະການປະຊຸມຂອງ ກຊກ ໄດ້ທຸກຄັ້ງ, ການໃຫ້ຄວາມຮູ້ດ້ານໂພສະນາການທີ່ດີ ແມ່ນຄວນໂອ້ລົມ ບໍ່ກາຍ 2 ຂໍ້ຄວາມຕໍ່ຄັ້ງ, ເດືອນລະ 2 ຄັ້ງ.

3. ການຄຸ້ມຄອງ ແລະ ລາຍງານຂໍ້ມູນໂຄງການ: ຜ່ານມາການລາຍງານຂໍ້ມູນ ຈາກເມືອງ ຍັງບໍ່ເປັນເອກະພາບ ແລະ ຊັກຊ້າ ພາໃຫ້ຜູ້ຮັບຜິດຊອບຂັ້ນສູນກາງບໍ່ສາມາດລວບລວມ ແລະ ສະຫຼຸບເປັນອັນລະອຽດຈະແຈ້ງເພື່ອລາຍງານໃຫ້ຫົວໜ້າໂຄງການ ແລະ ຜູ້ໃຫ້ທຶນ ສະນັ້ນທາງທະນາຄານໂລກໄດ້ຮຽກຮ້ອງໃຫ້ ແຕ່ລະເມືອງໄດ້ເກັບກຳຂໍ້ມູນຄືນຫຼັງ ແລະ ບັນທຶກໃສ່ແບບຟອມບັນທຶກແລ້ວສົ່ງໃຫ້ ສູນກາງ ແລະ ແຕ່ລະເມືອງກໍ່ໄດ້ຮັບປາກວ່າຈະເຮັດໃຫ້ໄດ້.
4. ທ່ານ ນາງ ດຣ. ລັດທິພອນ ຊຽວຊານດ້ານໂພຊະນາການ ຈາກສູນໂພຊະນາການແຫ່ງຊາດ ໄດ້ໃຫ້ຄຳເຫັນຕໍ່ກອງປະຊຸມວ່າ: ພະນັກງານຂັ້ນກຸ່ມບ້ານ ຕ້ອງໄດ້ມີການຝຶກອົບຮົມລົງເລິກ ໃນການຕິດຕາມ ແລະ ປະເມີນພາວະການຂາດສານອາຫານຂອງເດັກນ້ອຍ ດ້ວຍວິທີການທີ່ງ່າຍດາຍເພາະວ່າຈາກການສັງເກດແລ້ວ ພະນັກງານຂັ້ນບ້ານສ່ວນຫຼາຍແມ່ນ ເປັນພະນັກງານທີ່ເຮັດວຽກໃໝ່ ແລະ ບໍ່ມີວິຊາສະເພາະດ້ານໂພຊະນາການເລີຍ

<u>ວຽກປັບປຸງຊີວິດການເປັນຢູ່</u>

- ວຽກງານການປັບປຸງຊີວິດການເປັນຢູ່ໃນໄລຍະເດືອນສິງຫາ 2015 ແມ່ນໄດ້ຕິດຕາມການນຳໃຊ້ເງິນບ້ອງ 15,000 US$ =(120,000,000ລ້ານກີບ)ແມ່ນບ້ອງເງິນຈະສົ່ງເສີມການລ້ຽງໄກ່ເພື່ອສະໜອງແນວພັນໃຫ້ແກ່ສະມາຊິກຜູ້ລ້ຽງໄກ່, ແຕ່ເວລານີ້ມັນບໍ່ທັນມີຄວາມຈຳເປັນເທື່ອ ເພາະວ່າປະຊາຊົນຍັງຫາບແນວພັນຕາມທ້ອງຕະຫລາດຍັງພໍໄດ້ຢູ່. ສະນັ້ນຈຶ່ງທັນທຶນດັ່ງກ່າວມາເປັນການຝຶກອົບຮົມໃຫ້ຊາວບ້ານກ່ອນຈະປະຕິບັດກິດຈະກຳຕ່າງໆ ແລະ ຕິດຕາມກິດຈະກຳທີ່ໄດ້ສົ່ງເສີມໄປແລ້ວນັ້ນໃຫ້ມີການຕໍ່ເນື່ອງ.ດັ່ງນັ້ນ,ເງິນຈຳນວນດັ່ງກ່າວແມ່ນສືບຕໍ່ໃນການຝຶກອົບຮົມກິດຈະກຳຕ່າງໆໃຫ້ສະມາຊິກກຸ່ມຈົນກວ່າຈະສຳເລັດ.

<u>ຕາຕະລາງແຜນການນຳໃຊ້ເງິນບ້ອງ 15,000 ໂດລາ = 120,000,000 ກີບ/ເມືອງ</u>

| ລ/ດ | ລາຍການ | ຈຳນວນເງິນທີ່ຈ່າຍການເຄື່ອນໄຫວກິດຈະກຳຕ່າງໆຂອງແຕ່ລະເມືອງ (ກີບ) | | | | ລວມທັງໝົດ |
|---|---|---|---|---|---|---|
| | | ເມືອງ ຮົ່ງມ | ເມືອງຊ່ອນ | ເມືອງ ເຊໂປນ | ເມືອງ ນອງ | |
| 1 | ແຜນເຄື່ອນໄຫວວຽກງານໃນໄລຍະ 4 ເດືອນ(5-8/2015)<br>ກ່ຽວກັບກິດຈະກຳປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ | 100,477,000 | 105,388,000 | 123,170,000 | 102,551,000 | 431,586,000 |

ແຫລ່ງຂໍ້ມູນ: ໜ່ວຍງານປັບປຸງຊີວິດການເປັນຢູ່ ແລະໂພສະນາການ 31 ສິງຫາ 2015.

## 4. <u>ແຜນວຽກສຳລັບເດືອນ ກັນຍາ 2015</u>

▪ <u>ວຽກງານພັດທະນາຊຸມຊົນ</u>

- ຈັດກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດວຽກງານ ທລຍ ປະຈຳປີຂັ້ນເມືອງໃນຮອບວຽນ 12 ແລະ ຈັດກອງປະຊຸມແນະນຳວຽກງານ CDD ແລະ LN ຢູ່ 2 ແຂວງ ແລະ 3 ເມືອງ (ເມືອງທ່າປາງທອງແຂວງ ສະຫວັນ

ນະເຂດ, ເມືອງຫົວເມືອງ, ເມືອງຊຽງຄໍ້ ແຂວງ ຫົວພັນ.) ທີ່ຈະຂະຫຍາຍໃໝ່ໃນສົກປີ 2015-2016.

- ດໍາເນີນກອງປະຊຸມປະສານງານປະຈໍາເດືອນກັບຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງ ປະຈໍາຮອບວຽນ 12 ໃນແຕ່ລະເມືອງເປົ້າໝາຍ ທລຍ.
- ລົງຕິດຕາມວຽກງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານຂອງຄະນະກວດສອບທາງສັງຄົມຂັ້ນບ້ານ ແລະ ການເຄື່ອນໄຫວກົນໄກການສະແດງຄໍາຄິດຄໍາເຫັນ ແລະ ແກ້ໄຂບັນຫາໃນຂັ້ນບ້ານ, ກຸ່ມບ້ານ ແລະ ເມືອງ.
- ຈັດຊຸດຝຶກອົບຮົມການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນແບບເຕັມຮູບແບບ ແລະ ວິທີການວາງແຜນ ໃຫ້ພະນັກງານ ພັດທະນາຊຸມຊົນແຂວງ ສະຫວັນນະເຂດ ແລະ ແຂວງ ຫົວພັນ ລະຫວ່າງວັນທີ 21-25 ກັນຍາ 2015 ທີ່ແຂວງ ຫົວພັນ.
- ນໍາພານັກຂ່າວຈາກ ກົມຂ່າວສານແມ່ຍິງ, ໜັງສືພິມວຽງຈັນທາມ, ໜັງສືພິມປະຊາຊົນ, ໂທລະພາບແຫ່ງຊາດ, ວິທະຍຸແຫ່ງຊາດ ລົງໄປເກັບກໍາຂໍ້ມູນຂ່າວ ຢູ່ເມືອງນອງ ແລະ ເມືອງເຊໂປນ ແຂວງ ສະຫວັນນະເຂດ.
- ຂຽນຂ່າວ ສົ່ງໃຫ້ວິທະຍຸແຫ່ງຊາດ, ລາຍການລຸງສ້າງ-ລຸງສາ, ກົມຂ່າວສານແມ່ຍິງລາວ, ໜັງສືພິມຕ່າງໆ ແລະ ເວບໄຊ ທລຍ ໃຫ້ໄດ້ 5 ຂ່າວ ກ່ຽວກັບການຂະຫຍາຍ 3 ເມືອງໃໝ່ຂອງ CDD.
- ຈັດສໍາພາດ ລາຍການຮອບບ້ານຜ່ານເມືອງ, ລາຍການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ລາຍການ ລຸງສ້າງ-ລຸງສາ ແລະ ກົມຂ່າວສານແມ່ຍິງລາວ ສະຫະພັນແມ່ຍິງລາວ ກ່ຽວກັບ "ຜົນງານການເຄື່ອນໄຫວປະຈໍາປີ ແລະ ທິດທາງແຜນການຕໍ່ໜ້າ ເພື່ອຂໍ່ານັບຮັບຕ້ອນວັນຊາດທີ່ 2 ທັນວາ ແລະ ກອງປະຊຸມລັດຖະມົນຕີພັດທະນາຊົນນະບົດອາຊ່ຽນ ແລະ ວັນສັບປະດາສາກົນ ແລະ ວັນລຶບລ້າງຄວາມທຸກຍາກແຫ່ງຊາດ 17-24 ຕຸລາ 2015.

▪ <u>ວຽກງານວິສະວະກໍາ</u>

- ລໍຖ້າຄໍາຕອບຈາກຂັ້ນເທິງກ່ຽວກັບການປະດັບປະດາລົດແຫ່ຂະບວນສະເຫລີມສະຫລອງວັນຊາດທີ 2 ແລະ ສືບຕໍ່ກະກຽມແຜນລົງກວດກາໂຄງການຍ່ອຍ GOL ຮ່ວມກັບສະພາແຫ່ງຊາດ, ກະຊວງການເງິນ, ຄພທສ ແລະ ກະຊວງແຜນການ.
- ສືບຕໍ່ລົງຕິດຕາມໂຄງການຍ່ອຍ ຮອບວຽນທີ 11, 12 ແລະ ສືບຕໍ່ເຮັດວຽກຮ່ວມກັບ ILO (ລົງຕິດຕາມການຈັດຕັ້ງປະຕິບັດໂຄງການ ILO).
- ສືບຕໍ່ກະກຽມສໍາຫລວດໂຄງການຍ່ອຍ IDA ຮອບວຽນທີ 13.
- ກະກຽມຈັດກອງປະຊຸມເປີດໂຕໂຄງການ ແລະ ຝຶກອົບຮົມກະຕຸກຊຸກຍູ້ ຢູ່ຂັ້ນເມືອງ ກ່ຽວກັບໂຄງການຊຸມຊົນເປັນເຈົ້າໃນດ້ານສຸຂະອານາໄມ (ຊຈສ) ແລະ ສືບຕໍ່ສັງລວມຂໍ້ມູນທີ່ຕັ້ງໂຄງການຍ່ອຍ ຮອບວຽນທີ 9-12 ພ້ອມທັງກະກຽມຝຶກອົບຮົມພື້ນຖານການນໍາໃຊ້ໂປຣແກຣມ GIS ແລະ ກະກຽມສ້າງຫລັກສູດການນໍາໃຊ້ 3D.
- ກວດຄືນ ແລະ ປັບປຸງແບບແຕ້ມກໍ່ສ້າງອາຄານ ຕາມການຕົກລົງກັນໃນການຝຶກອົບຮົມປະຈໍາປີ

- <u>ວຽກງານຕິດຕາມປະເມີນຜົນ</u>

- ຈັດກອງປະຊຸມສໍາມະນາ ແລະ ແລກປ່ຽນບົດຮຽນກ່ຽວກັບວຽກງານຕິດຕາມ-ປະເມີນຜົນ ພະນັກງານທັງໝົດ ຂັ້ນສູນກາງ, 10 ແຂວງ ແລະ 5 ເມືອງທົດລອງແມ່ນໄດ້ເຂົ້າຮ່ວມ, ລວມທັງຜູ້ປະສານງານຂັ້ນແຂວງທັງ 10 ແຂວງ ອາມທັງຕົວແທນຈາກພາກລັດຖະບານ ແລະ ອົງການພັດທະນາໃນ ສປປ ລາວ ລວມທັງບັນດາຜູ້ໃຫ້ທຶນຂອງ ທລຍ.
- ເຂົ້າຮ່ວການເຮັດສຶກສາວຽກງານສາມສ້າງ ຮ່ວມກັບອົງການຮ່ວມມືເພື່ອຮຽນຮູ້ ແລະ ພັດທະນາແຫ່ງລາວ-ອິດສະຕາລີ ແລະ ຜູ້ຕາງໜ້າຈາກ ຄທພສ ເຊິ່ງຈະໄດ້ຈັດຂຶ້ນຢູ່ແຂວງຫລວງນໍ້າທາ.
- ສືບຕໍ່ຕິດຕາມບັນດາໂຄງການຍ່ອຍທີ່ຈະຈັດຕັ້ງປະຕິບັດສໍາລັບຮອບວຽນ 12 ສົກປີ 2014-2015 ທີ່ເປັນທຶນຊ່ວຍ ເຫລືອຂອງຕ່າງປະເທດ ເພື່ອຕິດຕາມບັນດາໂຄງການທີ່ມີຄວາມລ້າຊ້າ ແລະ ຫາວິທີໃນການແກ້ໄຂ.
- ກະກຽມບົດລາຍງານປະຈໍາປີ ພາສາລາວ ແລະ ພາສາອັງກິດ ເພື່ອລາຍງານຜົນໄດ້ຮັບຂອງໂຄງການຕະຫລອດໄລຍະເວລານຶ່ງປີຜ່ານມາ ແລະ ວາງແຜນເພື່ອການຈັດຕັ້ງປະຕິບັດໃນໄລຍະຕໍ່ໄປ.

- <u>ວຽກງານບໍລິຫານ-ການເງິນ</u>

- ປະເມີນ ແລະ ຄັດເລືອກພະນັກງານ ຮັບຜິດຊອບກິດຈະກໍາປັບປຸງຊີວິດການເປັນຢູ່ ແລະ ຄໍ້າປະກັນດ້ານໂພຊະນາການ. ເຊິ່ງຈັດຕັ້ງສູນກາງຈະໄດ້ເຂົ້າຮ່ວມວຽກດັ່ງກ່າວຢູ່ແຂວງ ສະຫວັນນະເຂດ ແລະ ແຂວງຫົວພັນ.
- ປະເມີນ ແລະ ຄັດເລືອກຜູ້ຊ່ວຍບັນຊີ ແລະ ກວດສອບພາຍໃນດ້ານວຽກງານວິສະວະກໍາປະຈໍາ ທລຍ ສູນກາງ
- ປະເມີນຜົນງານການເຮັດວຽກຂອງພະນັກງານ (ຫົວໜ້າໜ່ວຍງານກວດສອບພາຍໃນ, ຜູ້ຊ່ວຍກວດສອບພາຍໃນ, ຊ່ຽວຊານທີ່ປຶກສາຕ່າງປະເທດ) ເພື່ອສະເໜີຂໍອະນຸມັດຕໍ່ສັນຍາເປັນປີ ຈາກຜູ້ໃຫ້ທຶນ.
- ປະເມີນຜົນງານການເຮັດວຽກຂອງຜູ້ປະສານງານ ທລຍ ແຂວງ ສາລະວັນ ເພື່ອກະກຽມຕໍ່ສັນຍາເປັນປີ.
- ສືບຕໍ່ປະສານງານກັບຊ່ຽວຊານຕ່າງປະເທດ ກ່ຽວກັບການສ້າງປື້ຄູ່ມືວຽກງານຈັດຕັ້ງ-ພະນັກງານ ແລະ ການປັບປຸງນະໂຍບາຍທີ່ກ່ຽວພັນ.
- ກະກຽມເຂົ້າຮ່ວມຮັບໃຊ້ກອງປະຊຸມລັດຖະມົນຕີພັດທະນາຊົນນະບົດ ແລະ ລົບລ້າງຄວາມທຸກຍາກ ອາຊຽນ ຄັ້ງທີ 9 ແລະ ກອງປະຊຸມທີ່ກ່ຽວຂ້ອງ ໃນໄລຍະວັນທີ 12-18 ຕຸລາ 2015.

- <u>ວຽກປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ (LN)</u>

<u>ວຽກໂພຊະນາການ</u>

- ເຮັດບົດນໍາສະເໜີ ຜົນໄດ້ຮັບຈາກການປະຕິບັດກິດຈະກໍາໂພຊະນາການ ເພື່ອນໍາສະເໜີໃນກອງປະຊຸມແນະນໍາໂຄງການ LN ຂັ້ນແຂວງ ແຂວງຫົວພັນ ແລະ ສະຫວັນນະເຂດ.
- ເຮັດຕາຕະລາງ ແລະ ຟອມເກັບກໍາຂໍ້ມູນ ສຸຂະພາບ ແລະ ໂພຊະນາການສໍາລັບບ້ານທີ່ຈະສ້າງ VNC ໃໝ່

- ປັບປຸງຄູ່ມືແນະນຳໃນການຈັດຕັ້ງປະຕິບັດວຽກໂພຊະນາການໂຄງການ LN.

<u>ວຽກປັບປຸງຊີວິດການເປັນຢູ່</u>

- ຕິດຕາມກວດກາການທ້ອນເງິນ, ການເກັບກູ້ ແລະ ການປ່ອຍກູ້ ຂອງກຸ່ມ ກຊກ.
- ຕິດຕາມເກັບກຳ ກິດຈະກຳປັບປຸງຊີວິດການເປັນຢູ່ ໃນຮອບວຽນທີ 1 ແລະ ທີ່ 2 ແລະ 3 ທີ່ໄດ້ປ່ອຍເງິນອອກໄປແລ້ວ.ມີກິດຈະກຳຫຍັງແດ່, ແລະ ມີກິດຈະກາໃດທີ່ສ້າງລາຍໄດ້ແລ້ວ ແລະ ໄດ້ຈານວນເທົ່າໃດໃນແຕ່ລະເດືອນ.
- ກະກຽມຝຶກອົບຮົມໃຫ້ຊາວບ້ານແຕ່ລະກິດຈະກຳໃນຮອບວຽນທີ່ 3 ໃນທ້າຍເດືອນກັນຍາ 2015 ແລະໃຫ້ໄດ້ປ່ອຍທຶນໄປພ້ອມໆກັນໃຫ້ສຳເລັດ.
- ກະກຽມບົດແນະນຳໂຄງການສຳລັບເມືອງເປົ້າໝາຍໃໝ່ ແລະ ບົດແນະນຳ Guideline ປະເພດຕ່າງໆ ແລະ ກະກຽມລົງພາກສະໜາມເພື່ອໄປແນະນຳໂຄງການ LN ສຳລັບເມືອງເປົ້າໝາຍໃໝ່ ຂອງ 2 ແຂວງໃຫ້ສຳເລັດໃນທ້າຍເດືອນກັນຍາ 2015.

| | | |
|---|---|---|
| ເຊັນແທນ. <u>ຜູ້ອຳນວຍການບໍລິຫານ ທລຍ</u> | ຮອງ<u>ຫົວໜ້າພະແນກຕິດຕາມປະເມີນຜົ</u> | <u>ສັງລວມ ແລະ ລາຍງານ</u> |
| ຜູ້ອຳນວຍການ ບໍລິຫານ | | |
| ---------------------- | ------------------------ | -------------------- |
| ບົວລີ ໄຊຍະວົງ<br>Boualy SAYAVONG | ດາວວຽງ ໄຊຍະຈັກ | ມະນີວັນ ອິນທະປັນຍາ |